# ປະກາດຮັບສະໝັກ ທີ່ປຶກສາ (ດ່ວນ)

| | |
|---|---|
| ຕຳແໜ່ງ: | ທີ່ປຶກສາ ດ້ານການ ປະເມີນຜົນ ໂຄງການ ແບບມີສ່ວນຮ່ວມ |
| ບ່ອນປະຈຳການ: | ນະຄອນຫລວງວຽງຈັນ ແລະ ເດີນທາງໄປເຂດໂຄງການເມືອງນາກາຍ |
| ປະກາດໂດຍ | ສະມາຄົມ ນ້ຳໃຈຊາວບ້ານ |

**ສັງລວມຂໍ້ມູນ ກ່ຽວກັບໂຄງການ:**

ສປປລາວ ເປັນປະເທດທີ່ກຳລັງຈະກ້າວເຂົ້າເປັນສັງຄົມຜູ້ອາຍຸສູງ ໃນ ອີກ 10 ປີ ຂ້າງໜ້າ ແລະເພື່ອຕຽມຄວາມພ້ອມປົກປ້ອງສິດ ແລະ ຜົນປະໂຫຍດ ພ້ອມທັງໃຫ້ຄວາມເຄົາລົບແກ່ ຜູ້ອາຍຸສູງ ລັດຖະບານແຫ່ງສປປລາວ ໄດ້ ອອກດຳລັດ ເລກທີ 473/ນຍ ໃນເດືອນ ກໍລະກົດ 2021. ເພື່ອເປັນການຜັນຂະຫຍາຍດຳລັດດັ່ງກ່າວ ໄປຈັດຕັ້ງປະຕິບັດໃຫ້ເປັນນູບປະທຳ ສະມາຄົມນ້ຳໃຈຊາວບ້ານໄດ້ລິເລີ້ມໂຄງການ ສຽງຂອງຊາວໜຸ່ມເພື່ອສິດທິ ແລະການເຄົາລົບຜູ້ອາຍຸງສູງ ທີ່ ເຂດ ນາຕານ ແລະ ເມືອງຫຼວງ ເມືອງນາກາຍ ແຂວງຄຳມ່ວນ ເຊິ່ງໄດ້ທຶນສະໜັບສະໜູນ ຈາກ ອົງການອອກແຟມ ປະເທດ ເນເດີແລນ ໃນໄລຍະເວລາ ສອງປີ ແລະ ໂຄງການຈະສິ້ນສຸດລົງໃນເດືອນ ທັນວາ 2023.

ໂຄງການດັ່ງກ່າວ ມີຈຸດປະສົງລວມ ເພື່ອປະກອບສ່ວນ ໃນການຈັດຕັ້ງຜັນຂະຫຍາຍ ເນື້ອໃນດຳລັດວ່າດ້ວຍ ຜູ້ອາຍຸສູງ ໂດຍສະເພາະ ແມ່ນການເຜີຍແຜ່, ໂຄສະນາ ແລະ ປູກຈິດສຳນຶກ ໃຫ້ຊາວໜຸ່ມຄົນຮຸ່ນຫຼັງ ໄດ້ຮັບຮູ້ ແລະ ເຂົ້າໃຈເຖິງ ບົດບາດ ແລະ ການໃຫ້ຄວາມເຄົາລົບຜູ້ອາຍຸສູງໃນຊຸມຊົນ ແລະ ຄອບຄົວ ພ້ອມທັງປະກອບສ່ວນ ໃນການສ້າງແຜນຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດວຽກງານຜູ້ອາຍຸສູງ ຂອງລັດຖະບານ ໂດຍກຳນົດເອົາເຂດເມືອງຫຼວງ ແລະ ເຂດນາຕານ ເມືອງນາກາຍ ແຂວງຄຳມ່ວນ ເປັນເປົ້າໝາຍທົດລອງ ການຈັດຕັ້ງປະຕິບັດ ກິດຈະກຳໂຄງການ. ໂຄງການ ມີ 3 ຈຸດປະສົງສະເພາະ ດັ່ງຕໍ່ໄປນີ້:

**ຈຸດປະສົງສະເພາະ ທີ 1:** ສ້າງອາສາສະໝັກເພື່ອນຊ່ວຍເພື່ອນ ຂອງຜູ້ອາຍຸສູງໄດ້ຮັບການຄັດເລືອກ ແລະ ອົບຮົມເພື່ອເຜີຍແຜ່ດຳລັດເລກທີ 473/ລບ ວ່າດ້ວຍຜູ້ອາຍຸສູງ ແລະ ປູກຈິດສຳນຶກ ໃຫ້ຊຸມຊົນກ່ຽວກັບບັນຫາ ຂອງຜູ້ອາຍຸສູງ "ການເຄົາລົບຜູ້ອາຍຸສູງ"

**ຈຸດປະສົງສະເພາະ ທີ 2:** ການເບິ່ງແຍງດູແລ, ການຊ່ວຍເຫຼືອສະໜັບສະໜູນ ແລະ ໃຫ້ຄຳປຶກສາ ແກ່ຜູ້ອາຍຸສູງ.

**ຈຸດປະສົງສະເພາະ ທີ 3:** ການສ້າງແຜນຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດ ຮ່ວມກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ເພື່ອຜັນຂະຫຍາຍດຳລັດ ວ່າດ້ວຍຜູ້ອາຍຸສູງ ສະບັບເລກທີ 473/ລບ.

**ຈຸດປະສົງຂອງການປະເມີນຜົນແບບມີສ່ວນຮ່ວມ ແມ່ນ ເພື່ອ:**

- ປະເມີນຮ່ວມກັບຊາວບ້ານ ເຂດບ້ານເປົ້າໝາຍ ແລະ ຄູ່ຮ່ວມງານຂອງໂຄງການຈາກຂະແໜງການທີ່ກ່ຽວຂ້ອງ ຂັ້ນເມືອງ
- ປະເມີນ ປະສິດທິຜົນ, ປະສິດທິພາບ,, ຄວາມສອດຄ່ອງ ແລະ ຄວາມຍືນຍົງຂອງວິທີການ ໃນການຈັດຕັ້ງປະຕິບັດໂຄງການ

**ຂອບເຂດໜ້າວຽກ ແລະ ຈຸດສຸມຂອງການປະເມີນ**

ການປະເມີນຜົນແບບມີສ່ວນຮ່ວມນີ້ແມ່ນ ເພື່ອປະເມີນ ຄວາມສອດຄ່ອງ, ປະສິດທິຜົນ, ປະສິດທິພາບ, ຜົນໄດ້ຮັບ ແລະ ຄວາມຍືນຍົງຂອງໂຄງການ. ຄຳຖາມສຳລັບການປະເມີນ ແມ່ນມີດັ່ງຕໍ່ໄປນີ້:

- ຄວາມສອດຄ່ອງ:
  - ໂຄງການໄດ້ຕອບສະໜອງກັບ ສະພາບຂອງຜູ້ອາຍຸສູງ, ຄວາມຕ້ອງການ ແລະ ບູລິມະສິດ ໃນ ສປປລາວ ແນວໃດ?
  - ກິດຈະກຳໂຄງການ ແລະ ກິດຈະກຳທີ່ໄດ້ຮັບການຈັດຕັ້ງປະຕິບັດ ສອດຄ່ອງກັບຈຸດປະສົງຂອງໂຄງການແນວໃດ? ແລະ ຈຸດປະສົງໂຄງການໄດ້ຮັບການບັນລຸແນວໃດ?
  - ການນຳໃຊ້ ຊັບພະຍາກອນ ດ້ານການເງິນ, ບຸກຄະລາກອນ ແລະ ອື່ນໆ ຂອງໂຄງການ ມີຄວາມຍືດຍຸ່ນແນວໃດ?
  - ການວິເຄາະຄວາມສ່ຽງຂອງໂຄງການ ໄດ້ເບິ່ງບັນຫາຮອບດ້ານແນວໃດ?
- ປະສິດທິຜົນ:
  - ແມ່ນປັດໃຈໃດທີ່ປະກອບສ່ວນເຮັດໃຫ້ ປະສິດທິຜົນຂອງໂຄງການ ເພີ້ມຂຶ້ນ/ຫຼຸດລົງ

- o ຊັບພະຍາກອນ ດ້ານການເງິນ, ດ້ານບຸຄະລາກອນ ແລະ ການບໍລິຫານຈັດການອື່ນໆ ແມ່ນພຽງພໍສໍາລັບຈັດຕັ້ງປະຕິບັດໂຄງການແນວໃດ
  - o ຊັບພະຍາກອນ ດ້ານການເງິນ, ດ້ານບຸກຄະລາກອນ ແລະ ການບໍລິຫານຈັດການອື່ນໆ ແມ່ນໄດ້ສະໜອງໃຫ້ທັນເວລາແນວໃດ?
  - o ກິດຈະກໍາໂຄງການ ໄດ້ຕໍ່ຍອດ ໃຫ້ກັບວຽກງານ ຫຼືໂຄງການອື່ນໆໃນເຂດເປົ້າໝາຍແນວໃດ ໂດຍຄໍານຶງເຖິງຊັບພະຍາກອນທີ່ມີຢູ່ຂອງໂຄງການ?
- <u>ປະສິດທິພາບ:</u>
  - o ການນໍາໃຊ້ວິທີການໃຫ້ຊາວໜຸ່ມເຂົ້າມາມີສ່ວນຮ່ວມໃນວຽກງານສິ່ງເສີມສິດ ແລະ ການເຄົາລົບຜູ້ອາຍຸສູງ ແມ່ນມີປະສິດທິພາບແນວໃດ? ແມ່ນຫຍັງທີ່ເປັນຈຸດຄົງຄ້າງໃນການເອົາຊາວໜຸ່ມເຂົ້າມາມີສ່ວນຮ່ວມ?
- <u>ຜົນໄດ້ຮັບ:</u>
  - o ບົດຮຽນທີ່ໄດ້ຮັບຈາກວິທີການ ໃນການຈັດຕັ້ງປະຕິບັດໂຄງການ ເພື່ອໃຫ້ ຊາວໜຸ່ມ ແລະ ຜູ້ອາຍຸສູງເຮັດວຽກຮ່ວມກັນຢ່າງມີປະສິດທິພາບແມ່ນມີຫຍັງແດ່
- <u>ຄວາມຍືນຍົງ:</u>
  - o ມີເຄື່ອງມື, ກົນໄກ ແລະຄວາມອາດສາມາດໃດບໍ່ ທີ່ໂຄງການໄດ້ສ້າງຂຶ້ນ ເພື່ອຮັບປະກັນໃຫ້ ມີການນໍາໃຊ້ເຄື່ອງມືເຫຼົ່ານັ້ນ ຕໍ່ໄປພາຍຫຼັງໂຄງການສິ້ນສຸດລົງ.
- <u>ຄວາມສະເໝີພາບຍິງ-ຊາຍ:</u>
  - o ຄວາມສະເໝີພາບ ແລະ ສິດສະເໝີພາບຍິງ-ຊາຍ ໄດ້ຮັບການເອົາໃຈໃສ່ແນວໃດ ໃນການຈັດຕັ້ງປະຕິບັດໂຄງການ

**ສາຍພົວພັນວຽກງານ**

- ອໍານວຍການສະມາຄົມ
- ຄູ່ຮ່ວມງານ ຂອງ ມຊບ
- ຫົວໜ້າໂຄງການ ແລະ ພະນັກງານ ໂຄງການ ຂອງ ມຊບ

**ວິທີການ ໃນການປະເມີນຜົນແບບມີສ່ວນຮ່ວມ**

ການປະເມີນຜົນແບບມີສ່ວນຮ່ວມ ຈະດໍາເນີນປະກອບດ້ວຍ ຫົວໜ້າທີມ ທີ່ອໍານວຍຄວາມສະດວກ ໃຫ້ທີມງານໂຄງການ ແລະ ຜູ້ປະສານງານຈາກຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ສາມາດດໍາເນີນການສົນທະນາ ແລະ ປຶກສາຫາລື ກັບຊາວບ້ານ ດ້ວຍວິທີການຕ່າງໆ ທີ່ສາມາດປັບໃຫ້ເຂົ້າກັບສະພາບທ້ອງຖິ່ນໄດ້ ດັ່ງຕໍ່ໄປນີ້:

- ການສົນທະນາກຸ່ມ ໂດຍແຍກ ຍິງ-ຊາຍ, ຊາວໜຸ່ມ ແລະ ຜູ້ອາຍຸສູງ ພາຍໃນບ້ານ ກ່ຽວກັບການມີສ່ວນຮ່ວມ ແລະ ແນວຄິດລິເລີ່ມຂອງເຂົາເຈົ້າ ໃນການຜັນຂະຫຍາຍ ດໍາລັດ 473/ລບ
- ສໍາພາດຄະນະນໍາເມືອງ ແລະ ຄະນະບ້ານ ແລະອາສາສະໝັກ
- ທົບທວນເອກະສານຕ່າງໆ ເຊັ່ນເອກະສານໂຄງການ, ແຜນຍຸດທະສາດ, ແຜນປະຕິບັດງານ ແລະ ບົດລາຍງານຕ່າງໆ.
- ການສັງເກດ ກິດຈະກໍາຕ່າງໆ.

**ໄລຍະເວລາ ແລະ ເອກະສານຕ່າງໆ ທີ່ຕ້ອງໄດ້ຍື່ນໃຫ້ສະມາຄົມ**

| | |
|---|---|
| • ປະຊຸມກັບ ທີມງານໂຄງການ | ອາທິດທີ່ 2 ຂອງ ເດືອນ ພະຈິກ |
| • ກະກຽມຄໍາຖາມລະອຽດ ແລະ ວິທີການສໍາລັບດໍາເນີນການປະເມີນຜົນແບບມີສ່ວນຮ່ວມ ພ້ອມທັງ ລາຍການວ່າຈະສໍາພາດພາກສ່ວນໃດແດ່ | ອາທິດ ທີ່ 2 ພະຈິກ |
| • ສໍາພາດ ຄູ່ຮ່ວມງານພາກລັດ ແລະ ສະມາຄົມນໍ້າໃຈຊາວບ້ານ | ອາທິດທີ່ 3 ພະຈິກ |
| • ດໍາເນີນການປະເມີນຮ່ວມກັບຊາວບ້ານ | ອາທິດ ສຸດທ້າຍຂອງເດືອນ ພະຈິກ |

## ປະກາດຮັບສະໝັກ ທີ່ປຶກສາ (ດ່ວນ)

| | |
|---|---|
| • ຍື່ນຮ່າງບົດລາຍງານ (ພາສາລາວ) | ອາທິດທີ 2 ທັນວາ |
| • ຍື່ນບົດລາຍງານສະບັບສົມບູນ (ພາສາລາວ ແລະ ອັງກິດ) | ອາທິດທີ 3-4 ທັນວາ |
| **ວຽກທີ່ ຕ້ອງສົ່ງ ແລະ ການຈ່າຍຄ່າແຮງງານ** | |
| • ແຜນວຽກ ວິທີການ ແລະ ຄຳຖາມ ສຳລັບການປະເມີນແບບມີສ່ວນຮ່ວມ | 25% ຂອງມູນຄ່າສັນຍາ |
| • ຮ່າງບົດລາຍງານການປະເມີນ ສູງສຸດບໍ່ໃຫ້ການ 30 ໜ້າ ພາສາລາວ | 35% ຂອງມູນຄ່າສັນຍາ |
| • ບົດລາຍງານສະບັບສົມບູນ ທັງພາສາລາວ ແລະ ອັງກິດ | 40% ຂອງມູນຄ່າສັນຍາ |

**ທັກສະ ແລະ ຄວາມສາມາດ ທີ່ຕ້ອງການ**

- ທັກສະການວິເຄາະ: ຄວາມສາມາດໃນການວິເຄາະຂໍ້ມູນແບບມີສ່ວນຮ່ວມ ແລະ ຂໍ້ມູນ, ກຳນົດທ່າອ່ຽງ, ແລະ ແຕ້ມຄວາມເຂົ້າໃຈ ແລະ ບົດສະຫຼຸບ.
- ເອົາໃຈໃສ່ກັບລາຍລະອຽດ: ຄວາມສາມາດໃນການຮັບປະກັນຄວາມຖືກຕ້ອງ ແລະ ຄວາມສົມບູນຂອງຂໍ້ມູນ, ບົດລາຍງານ, ກຳນົດ ແລະ ແກ້ໄຂຂໍ້ຜິດພາດ.
- ທັກສະດ້ານພາສາ: ສາມາດ ສື່ສານພາສາອັງກິດ ໄດ້ໃນລະດັບດີ
- ທັກສະການສື່ສານ: ຄວາມສາມາດໃນການສື່ສານຢ່າງມີປະສິດທິພາບກັບຊາວບ້ານ ຜູ້ອາຍຸສູງ ແລະ ໄວໜຸ່ມທັງຍິງ ແລະ ຊາຍ, ລວມທັງການນຳສະເໜີຂໍ້ມູນ ແລະ ການວິເຄາະທີ່ສັບສົນຢ່າງຈະແຈ້ງ ແລະ ຮັດກຸມ.
- ທັກສະລະຫວ່າງບຸກຄົນ: ຄວາມສາມາດໃນການສ້າງ ແລະ ຮັກສາຄວາມສຳພັນກັບຊາວບ້ານ ແລະ ພາກສ່ວນກ່ຽວຂ້ອງອື່ນໆ, ແລະ ເຮັດວຽກຢ່າງມີປະສິດທິພາບໃນສະພາບແວດລ້ອມຂອງທີມ.
- ຄວາມຍືດຫຍຸ່ນ ແລະ ການປັບຕົວ: ຄວາມສາມາດໃນການປັບຕົວກັບການປ່ຽນແປງບູລິມະສິດແລະສະຖານະການ, ແລະເຮັດວຽກໃນສະພາບແວດລ້ອມທີ່ມີຄວາມໄວແລະການເຄື່ອນໄຫວ.
- ການຄິດຍຸດທະສາດ: ຄວາມສາມາດໃນການຄິດຢ່າງມີວິພາກວິຈານ ແລະ ຍຸດທະສາດ, ແລະ ການນຳໃຊ້ຂໍ້ມູນ ແລະ ການວິເຄາະເພື່ອແຈ້ງການຕັດສິນໃຈແບບແຜນງານ.
- ຄວາມອ່ອນໄຫວທາງດ້ານວັດທະນະທຳ: ຄວາມສາມາດໃນການເຮັດວຽກຢ່າງມີປະສິດທິພາບໃນທົ່ວວັດທະນະທຳທີ່ແຕກຕ່າງກັນ, ແລະ ເຄົາລົບແລະເຂົ້າໃຈຄວາມແຕກຕ່າງທາງວັດທະນະທຳແລະການປະຕິບັດ.

ຜູ້ສະໝັກ ທີ່ມີຄວາມສົນໃຈກະລຸນາຍື່ນປະຫວັດ, ໜັງສືສະແດງຄວາມສົນໃຈ ພ້ອມລະບຸເງິນເດືອນທີ່ຄາດຫວັງ ແລະ ສົ່ງເຖິງ ອີເມລ: ncalaos@ncalaos.org. CC: m.phommavong@ncalaos.org ຫລື ທ່ານ ສາມາດສົ່ງທີ່ຫ້ອງການ ສະມາຄົມ ນ້ຳໃຈຊາວບ້ານໄດ້ ທີ່ບ້ານ ອານຸ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ. ເບີໂທລະສັບ **021 253 125**

**ມື້ປິດຮັບສະໝັກ ວັນທີ 02/11/2023**